**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຫ້ອງການ ເລກທີ 5615 /ກຊສ.ຫກ

ນະຄອນຫລວງວຽງຈັນ, ວັນທີ 28 ສິງຫາ 2013

**ຮຽນ: - ທ່ານ ຫົວໜ້າຫ້ອງການ ກະຊວງ ອຸດສະຫະກຳ ແລະ ການຄ້າ**

**- ທ່ານ ຫົວໜ້າກົມພາສີ, ກະຊວງ ການເງິນ**

**- ທ່ານ ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫລວງວຽງຈັນ**

**ເລື່ອງ: ການຈົດທະບຽນ ແລະ ຂໍໃບອະນຸຍາດ ນຳເຂົ້າ-ສົ່ງອອກ, ຜ່ານແດນ ແລະ ການນຳເຂົ້າ ເພື່ອ ສົ່ງອອກ ສານເຄມີ ທີ່ທຳລາຍຊັ້ນໂອໂຊນ (ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ), ເຄື່ອງເຮັດຄວາມເຢັນ ແລະ ແອບ້ານ ລວມທັງການກຳນົດໂຄຕ້າ ການນຳເຂົ້າ ປະຈຳປີ 2014.**

- ອີງຕາມຂໍ້ຕົກລົງ ສະບັບເລກທີ 7858/ກຊສ, ລົງວັນທີ 9 ພະຈິກ 2012 ວ່າດ້ວຍ ການຄຸ້ມຄອງສານເຄມີ ທີ່ທຳລາຍຊັ້ນໂອໂຊນ;

ຫ້ອງການ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດຮຽນມາຍັງບັນດາທ່ານຊາບວ່າ: ປັດຈຸບັນການປະຕິບັດພັນທະ ຂອງ ສປປ ລາວ ຕໍ່ອະນຸສັນຍາມົງເຣອານ ວ່າດ້ວຍ ສານເຄມີທີ່ທຳລາຍຊັ້ນໂອໂຊນ ແມ່ນການຫລຸດຜ່ອນ ແລະ ຢຸດຕິນຳໃຊ້ສານ HCFCs ທີ່ເປັນສານເຄມີທຳລາຍຊັ້ນໂອໂຊນ ເຊິ່ງໃນນັ້ນໄດ້ເໜັ້ນໜັກໃສ່ **ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ** R-22 ທີ່ມີການນຳໃຊ້ທົ່ວໄປ ໃນຮ້ານສ້ອມແປງເຄື່ອງເຮັດຄວາມເຢັນ ແລະ ແອບ້ານ ຊຶ່ງມີຄວາມຈຳເປັນຕ້ອງໄດ້ຄວບຄຸມ ນຳເຂົ້າ-ສົ່ງອອກ, ຜ່ານແດນ ແລະ ການນຳເຂົ້າເພື່ອ ສົ່ງອອກ ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນດັ່ງກ່າວ ພ້ອມທັງຕິດຕາມປະລິມານ ນຳເຂົ້າ-ສົ່ງອອກ, ຜ່ານແດນ ແລະ ການນຳເຂົ້າ ເພື່ອ ສົ່ງອອກ ອຸປະກອນເຄື່ອງເຮັດຄວາມເຢັນ ເຊັ່ນ: ແອເຢັນ, ຕູ້ເຢັນ, ຕູ້ນ້ຳເຢັນ, ຕູ້ຜະລິດນ້ຳກ້ອນອານາໄມ, ຕູ້ແຊ່ ແລະ ເຄື່ອງເຮັດຄວາມເຢັນປະເພດອື່ນໆ ຊຶ່ງການຄວບຄຸມໄດ້ເລີ່ມຕັ້ງແຕ່ປີ 2013 ເປັນຕົ້ນມາ.

ສະນັ້ນ, **ສຳລັບປີ 2014** ການຄວບຄຸມ ຕິດຕາມ ນຳເຂົ້າ-ສົ່ງອອກ, ຜ່ານແດນ ແລະ ການນຳເຂົ້າ ເພື່ອ ສົ່ງອອກ ຈະໄດ້ປະຕິບັດ ຕາມຂັ້ນຕອນດັ່ງນີ້:

1. ຜູ້ປະກອບການ ແລະ ບັນດາບໍລິສັດນຳເຂົ້າ-ສົ່ງອອກ, ຜ່ານແດນ ແລະ ການນຳເຂົ້າ ເພື່ອ ສົ່ງອອກ ຈະຕ້ອງຂໍຈົດທະບຽນ ແລະ ຂໍໃບອະນຸຍາດ ນຳເຂົ້າ-ສົ່ງອອກ ແລະ ຜ່ານແດນ ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ R-22 ລວມທັງ ອຸປະກອນເຄື່ອງເຮັດຄວາມເຢັນ ແລະ ແອເຢັນ ຈາກ ກົມຄວບຄຸມມົນລະພິດ, ກະຊວງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ເລີ່ມ**ຕັ້ງແຕ່ວັນທີ 16 ກັນຍາ ເຖິງ 31 ຕຸລາ 2013**;

2. ກົມຄວບຄຸມມົນລະພິດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະສົມທົບ ກັບ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ນະຄອນຫລວງ ເພື່ອປຶກສາຫາລືກັນ

ກ່ອນການແຈ້ງຜົນການແບ່ງປັນໂຄຕ້າ ນຳເຂົ້າ-ສົ່ງອອກ, ຜ່ານແດນ ແລະ ການນຳເຂົ້າ ເພື່ອ ສົ່ງອອກ ຊ້າ **ສຸດບໍ່ໃຫ້ກາຍ ວັນທີ່ 25 ພະຈິກ 2013** ໃຫ້ແກ່ຜູ້ປະກອບການ ແລະ ບັນດາບໍລິສັດນຳເຂົ້າ, ສົ່ງອອກ;

3. ສຳລັບສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ ຊະນິດອື່ນໆ ເຊັ່ນ: R-134a, R-404A, R-406A, R-407A, R-410A, R-407A, R-600a, Ammonia ແລະ ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ ຊະນິດອື່ນໆ ຜູ້ປະກອບການ ແລະ ບັນດາບໍລິສັດນຳເຂົ້າ-ສົ່ງອອກ ຈະຕ້ອງໄດ້ຂໍຈົດທະບຽນ ແລະ ຂໍໃບອະນຸຍາດ ເຊັ່ນດຽວກັນ;

4. ຜູ້ປະກອບການ ແລະ ບັນດາບໍລິສັດ ນຳເຂົ້າ-ສົ່ງອອກ ທີ່ບໍ່ໄດ້ຈົດທະບຽນ ແລະ ບໍ່ໄດ້ໃບອະນຸຍາດ ຈາກ ກົມຄວບຄຸມມົນລະພິດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທີ່ລະບຸໄວ້ໃນຂໍ້ 1 ຂ້າງເທິງນັ້ນ ຈະບໍ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ, ອຸປະກອນເຄື່ອງເຮັດຄວາມເຢັນ ແລະ ແອບ້ານ;

5. ສານເຮັດຄວາມເຢັນ ຫລື ນ້ຳຢາແອເຢັນ ພາຍຫລັງໄດ້ຮັບໃບອະນຸຍາດຈາກ ກົມຄວບຄຸມມົນລະພິດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວ ຕ້ອງໄດ້ຜ່ານການກວດກາຄຸນນະພາບ ແລະ ຕິດສະຕິກເກີຢັ້ງຢືນທຸກຄັ້ງ ຈາກ ເຈົ້າໜ້າທີ່ພາສີປະຈຳດ່ານ ໂດຍສົມທົບກັບ ກົມຄວບຄຸມມົນລະພິດ ຫລື ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ນະຄອນຫລວງ ຈຶ່ງຈະໄດ້ຮັບອະນຸຍາດນຳເຂົ້າຈາກເຈົ້າໜ້າທີ່ພາສີ;

6. ສຳລັບແບບຟອມຕ່າງໆ ທ່ານສາມາດພົວພັນທີ່ໜ່ວຍງານໂອໂຊນ, ກົມຄວບຄຸມມົນລະພິດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ດັ່ງນັ້ນ, ຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຶ່ງຂໍຖືເປັນກຽດສະເໜີມາຍັງທ່ານ ເພື່ອຊາບ ແລະ ຂໍການຮ່ວມມື ແຈ້ງການໄປຍັງບັນດາຫົວໜ່ວຍທຸລະກິດຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າຫ້ອງການ

ເກສອນ ໄຊຍະເສນ

ບ່ອນສົ່ງ

- ທ່ານ ເລຂາທິການສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດ
- ທ່ານ ຜູ້ອຳນວຍການ ບໍລິສັດ ວຽງຈັນຊິບປີງ ສ່ວນບຸກຄົນ, ນະຄອນຫລວງວຽງຈັນ;
- ທ່ານ ຜູ້ອຳນວຍການ ບໍລິສັດ LS ການຄ້າ ຂາອອກ-ຂາເຂົ້າ ແຂວງຫລວງນ້ຳທາ;
- ທ່ານ ຜູ້ອຳນວຍການ ບໍລິສັດ ລັດວິສະຫະກິດ ຂາອອກ-ຂາເຂົ້າ ແຂວງຫລວງນ້ຳທາ;
- ທ່ານ ຜູ້ອຳນວຍການ ບໍລິສັດ ຮຸ່ງອາລຸນການຄ້າ ຂາອອກ ຂາເຂົ້າ ແຂວງຫລວງນ້ຳທາ;
- ທ່ານ ຜູ້ອຳນວຍການ ບໍລິສັດ ຮ່ວມໃຈພັດທະນາຄົບວົງຈອນຈຳກັດ ແຂວງຫລວງນ້ຳທາ;
- ທ່ານ ຜູ້ອຳນວຍການ ບໍລິສັດ ໂລຕະພັນການຄ້າຂາອອກ

ຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:

ກົມຄວບຄຸມມົນລະພິດ,
ໂທລະສັບ: 021 243701-2, Fax: 021 243700
ນ. ຂັນທະລັກ ຄູນສົມບັດ 020 9989 9969
ນ. ສົມສະນິດ ຈອມເພັດສະລາດ 020 9943 3147